# ບົດທີ 17

# ວັດຖຸສິ່ງຂອງ ພາກປາຍ




*ພະຍາມານມາທົດລອງພະອົງໃຫ້ເຂົ້າໄປທາງວັດຖຸສິ່ງຂອງເພື່ອໃຫ້ໄດ້ຄວາມຍຸດຕິທຳ
ແຕ່ວ່າພະອົງຮູ້ວ່າ ມີການບົກຜ່ອງຫຼາຍໃນວັດຖຸສິ່ງຂອງຖ້າເຮັດຢ່າງນັ້ນ.
ພະອົງຈຶ່ງສະຫລະຕົວໃຫ້ຕາຍທີ່ໄມ້ກາງແຂນ.*

**1** ໃນບົດຮຽນກ່ອນພວກເຮົາໄດ້ສຶກສາກ່ຽວກັບການບົກຜ່ອງ 4 ປະການໃນວັດຖຸສິ່ງຂອງ. (ໃຫ້ທ່ານຈົດ 4 ປະການນັ້ນ)

________________________________ ________________________________

________________________________ ________________________________

**2** ວັດຖຸສິ່ງຂອງເປັນວິທີທາງທີ່ບາງຄົນພະຍາຍາມແກ້ໄຂບັນຫາບໍ່ຍຸດຕິທຳແຫ່ງສັງຄົມທົ່ວໄປ. ພະເຍຊູສະເໜີທາງແທ້ ຈິງທີ່ຈະແກ້ໄຂການບໍ່ຍຸດຕິທຳໄດ້. ພະອົງໃຫ້ເຮົາສະແຫວງຫາອັນໃດກ່ອນໃນ ມທ 6:33? ________________________________

*ມີແຕ່ອານາຈັກຂອງພະເຈົ້າທີ່ຈະແກ້ໄຂບັນຫາຄວາມບໍ່ຍຸດຕິທຳດ້ານສັງຄົມ ດ້ານເສດຖະກິດ ແລະ ດ້ານການເມືອງໄດ້ ເພາະມີແຕ່ອານາຈັກດຽວເທົ່ານີ້ທີ່ປະກອບດ້ວຍການຍຸດຕິທຳໝົດສິ້ນ.*

**3** ໃຫ້ທ່ານອ່ານຈາກຂໍ້ພະຄຳພີຕໍ່ໄປນີ້ ຂໍ້ໃດທີ່ມີຄຳວ່າ "ແຜ່ນດິນ" ໃຫ້ໝາຍ √ ໃສ່ແຖວ "ແຜ່ນດິນ" ຂໍ້ໃດມີຄວາມ "ຊອບທຳ" ໃຫ້ໝາຍ ໄວ້ໃນແຖວ "ຊອບທຳ" ເຊັ່ນດຽວກັນ.

| | ອານາຈັກ ຫຼື "ແຜ່ນດິນ" | ສິນທຳ ຫຼື "ຊອບທຳ" |
|---|---|---|
| ກ. ມັດທາຍ 5:3 | ____________ | ____________ |
| ຂ. ມັດທາຍ 5:6 | ____________ | ____________ |
| ຄ. ມັດທາຍ 5:10 | ____________ | ____________ |
| ງ. ມັດທາຍ 5:20 | ____________ | ____________ |
| ຈ. ມັດທາຍ 6:33 | ____________ | ____________ |
| ສ. ໂລມ 14:16-17 | ____________ | ____________ |

**4** ໃຫ້ອ່ານ ມທ 5:20 ອີກ. ພະເຍຊູບອກວ່າ ຄົນໃດທີ່ຈະເຂົ້າໃນແຜ່ນດິນສະຫວັນ ຕ້ອງລື່ນກ່ວາພວກນັກທຳແລະພວກ ຟາລີຊາຍ ໃນການໃດ? ____________________

**5** ໃຫ້ອ່ານ ມທ 5:10. ແຜ່ນດິນສະຫວັນເປັນຂອງຄົນທີ່ຖືກຂົ່ມເຫັງເພາະເຫັນແກ່ຫຍັງ? ____

ຕອບ:

**1** *ບໍ່ໃຫ້ພໍໃຈ ບໍ່ທົນທານ ບໍ່ສາມາດຈະປ່ຽນຈິດໃຈມະນຸດ ໄຖ່ບາບໃຫ້ລອດພົ້ນບໍ່ໄດ້*

**2** *ລາຊະອານາຈັກຂອງພະເຈົາ*

**3** *ອານາຈັກ ຫຼື ແຜ່ນດິນ ຖືກກັບ ກ. ຄ. ງ. ຈ. ແລະ ສ.*
*ສິນທຳ ຫຼື ຊອບທຳ ຖືກກັບ ຂ. ຄ. ງ. ຈ. ແລະ ສ.*

**4** *ການຖືສິນທຳ*

**5** *ຄວາມຊອບທຳ*

**6** ດັ່ງນັ້ນ ພະເຢຊູສອນວ່າ ຄວາມຊອບທຳທີ່ຈິງຈະບໍ່ມາດ້ວຍວັດຖຸສິ່ງຂອງ ແຕ່ຈະມາດ້ວຍອານາຈັກໃດ? ____________________________________________

**7** ໃຫ້ອ່ານ ມັດທາຍ 25:34-40 ຄົນທີ່ສົນທຳໃນອານາຈັກສະຫວັນຈະເຮັດຢ່າງໃດ ຕໍ່ຈຳພວກເຫຼົ່ານີ້?

ກ. ຕໍ່ຄົນຢາກເຂົ້າ ______________ ຂ. ຕໍ່ຄົນຫິວນໍ້າ ________________

ຄ. ຕໍ່ແຂກບ້ານ _______________ ງ. ຕໍ່ຄົນເປືອຍຕົວ _______________

ຈ. ຕໍ່ຄົນເຈັບປ່ວຍ ________________ ສ. ຕໍ່ຄົນຢູ່ໃນຄຸກ ______________

**8** ໃຫ້ອ່ານ ມທ 25:41-46 ຄົນໃດທີ່ບໍ່ໄດ້ສະແດງຄວາມຊອບທຳຕໍ່ຄົນເຫຼົ່ານັ້ນຈະເຂົ້າໄປໃນລາຊະອານາຈັກພະເຈົ້າ ໄດ້ບໍ່? ___________________________________

ໃຫ້ທ່ານຂ້າອອກປະໂຫຍກໃດທີ່ບໍ່ຈິງ:

ກ. ວັດຖຸສິ່ງຂອງມີເປົ້າຫມາຍວ່າຈະຫາໃຫ້ສິ່ງໃດທີ່ຮ່າງກາຍຕ້ອງການ.

ຂ. ຄົນຊອບທຳໃນອານາຈັກພະເຈົ້າກໍຈະຫາໃຫ້ສິ່ງທີ່ຄົນທຸກຍາກຕ້ອງການ.

ຄ. ວັດຖຸສິ່ງຂອງມີເປົ້າຫມາຍຈະຊ່ວຍຄົນດ້ານຈິດວິນຍານ.

**9** ຄົນໃດທີ່ຂຶ້ນກັບລາຊະອານາຈັກຂອງພະເຈົ້າ ສົມຄວນຈະສະແດງຄວາມຍຸດຕິທຳເຊັ່ນດຽວກັນກັບພະເຢຊູ. ໃນ 5 ຂໍ້ ຕໍ່ໄປນີ້ມີໃນຂໍ້ໃດ ທີ່ພະເຢຊູເປັນຫ່ວງກັບຄົນຍາກຈົນ (ຫຼືອານາຖາກໍໄດ້)? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ລູກາ 4:18

ຂ. ລູກາ 6:20

ຄ. ລູກາ 7:22

ງ. ລູກາ 14:13-14

ຈ. ລູກາ 18:22

ຕອບ:

**6** *ຂອງພະເຈາ (ສະຫວັນກໍໄດ້)*

**7** *ກ. ໃຫ້ກິນ ຂ. ໃຫ້ດື່ມ ຄ. ຕ້ອນຮັບໄວ້ ງ. ເອົາເຄື່ອງມາໃຫ້ນຸ່ງ ຈ. ມາຢ້ຽມຢາມ ສ. ມາຫາ*

**8** *ບໍ່ ຂີດຂ້າຂໍ້ ຄ. ອອກ*

**9** *ຖືກທັງຫມົດ*

**10** ໃນບາງຂໍ້ເຫຼົ່ານັ້ນພະອົງເວົ້າເຖິງການຕ້ອງການດ້ານວັດຖຸສິ່ງຂອງຢ່າງດຽວ ແລະໃນອີກບາງຂໍ້ພະອົງສະແດງຄວາມ ຫ່ວງເພື່ອຈິດວິນຍານອີກດ້ວຍ. ໃຫ້ທ່ານກັບໄປອ່ານ ລູກາ 7:22 ອີກ ໃນຂໍ້ນັ້ນພະອົງຫ່ວງຫຍັງ? (ເລືອກ)

ກ. ດ້ານຮ່າງກາຍຢ່າງດຽວ ຂ. ດ້ານຈິດວິນຍານຢ່າງດຽວ

ຄ. ທັງຮ່າງກາຍແລະຈິດວິນຍານ ງ. ບໍ່ຫ່ວງຈັກປະການ

**11** ວັດຖຸສິ່ງຂອງພາໃຫ້ເກີດມີຄວາມກຽດຊັງແລະການວິວາດຜິດຖຽງກັນລະຫວ່າງຊົນຊັ້ນໃນສັງຄົມ ເພາະວັດຖຸສິ່ງຂອງ ນັ້ນແກ້ໄຂແຕ່ບັນຫາດ້ານຮ່າງກາຍຝ່າຍດຽວ. ໃຈມະນຸດທີ່ຖືແຕ່ວັດຖຸສິ່ງຂອງ:

ກ. ຄົນຍາກຈົນກຽດຊັງໃຜ? ____________________________________________

ຂ. ຄົນຮັ່ງມີກຽດຊັງໃຜ? ____________________________________________

**12** ແຕ່ໃນອານາຈັກຂອງພະເຈົ້າບໍ່ເປັນຢ່າງນັ້ນ ຄົນໃດທີ່ຂຶ້ນກັບອານາຈັກຂອງພະເຈົ້າກໍມີການເປັນຫ່ວງທັງຮ່າງກາຍ ແລະ ຈິດວິນຍານອີກດ້ວຍ ເພາະເຫດນີ້ຜູ້ມີສ່ວນໃນອານາຈັກຂອງພະເຈົ້າມີຄວາມຮັກຕໍ່ຄົນຍາກຈົນ ແລະຄົນຮັ່ງມີ. ເຊັ່ນດຽວກັນ ໃນຕອນພະຄຳພີ 2 ຕອນຕໍ່ໄປນີ້ພະອົງຊ່ອຍຄົນຍາກຈົນໃນຂໍ້ໃດ? ຊ່ອຍຄົນຜູ້ມີກຽດໃນຂໍ້ໃດ?

ກ. ລູກາ 8:41-42 ____________________________________________

ຂ. ລູກາ 8:43-44 ____________________________________________

**13** ສະເພາະເຮົາເຫັນວ່າ ຄວາມຍຸດຕິທຳແທ້ຈິງໃນແຜ່ນດິນຂອງພະເຈົ້າ ກໍມີຢູ່ຕໍ່ຄົນ ________ ແລະ ຄົນ _____________ ອີກດ້ວຍ. (ຕື່ມຄວາມທີ່ຂາດ)

**14** ຄວາມຍຸດຕິທຳແທ້ຈິງໃນອານາຈັກຂອງພະເຈົ້າ ແລະຄວາມຍຸດຕິທຳອັນບໍ່ສົມບູນຂອງວັດຖຸສິ່ງຂອງມີສ່ວນທີ່ແຕກ ຕ່າງກັນ ຄວາມຍຸດຕິທຳຂອງອານາຈັກຂອງພະເຈົ້າ ໃຊ້ເປັນປະໂຫຍດຢ່າງໃດ? (ໃຫ້ເລືອກ)

ກ. ຮ່າງກາຍເທົ່ານັ້ນ ຂ. ຈິດວິນຍານເທົ່ານັ້ນ

ຄ. ທັງຮ່າງກາຍແລະຈິດວິນຍານດ້ວຍ ງ. ເພື່ອກຳລັງໃຈຢ່າງດຽວ

ຕອບ:

***10*** *ຄ. ຖືກ*

***11*** *ກ. ຄົນຮັ່ງມີ ຂ. ຄົນຍາກຈົນ*

***12*** *ກ. ຜູ້ມີກຽດ ຂ. ຄົນຍາກຈົນ*

***13*** *ຍາກຈົນ...ຮັ່ງມີ*

***14*** *ຄ. ຖືກ*

**15** ຖ້າຢ່າງນັ້ນອານາຈັກຂອງພະເຈົ້າ ດີກວ່າວັດຖຸສິ່ງຂອງໃນທຸກດ້ານ.

ກ. ມີອັນໃດ ລະຫວ່າງອານາຈັກຂອງພະເຈົ້າ ຫຼືວັດຖຸສິ່ງຂອງທີ່ຫ່ວງກັບຮ່າງກາຍແຕ່ບໍ່ຫ່ວງກັບຈິດວິນຍານ?________________________________________________

ຂ. ອັນໃດຫ່ວງທັງຈິດວິນຍານແລະຮ່າງກາຍ? ______________________________

**16** ຄວາມຍຸດຕິທຳແທ້ຈິງຈະພົບຢູ່ໃສ? ____________________________________

**17** ຄືວ່າຄວາມຍຸດຕິທຳອັນແທ້ຈິງຂອງອານາຈັກຂອງພະເຈົ້າ ຫ່ວງທັງຄວາມຕ້ອງການໃນຮ່າງກາຍແລະຈິດວິນຍານດ້ວຍ. ໃຫ້ອ່ານ ມທ 6:33 ອີກ. ໃນຄຳວ່າ "ພະອົງຈະຊົງເພີ່ມເຕີມສິ່ງທັງປວງເຫຼົ່ານີ້" ອ້າງເຖິງຂອງກິນ, ຂອງດື່ມ ແລະເຄື່ອງນຸ່ງຫົ່ມໃນຂໍ້ 31. ດັ່ງນັ້ນໃນ ມທ 6:33 ນີ້ຄວາມຍຸດຕິທຳແທ້ຈິງກ່ຽວເລື່ອງຫຍັງ? (ໃຫ້ເລືອກ)

ກ. ຮ່າງກາຍຢ່າງດຽວ
ຂ. ຈິດວິນຍານຢ່າງດຽວ
ຄ. ທັງສອງແຕ່ເນັ້ນໜັກຮ່າງກາຍກ່ອນ
ງ. ທັງສອງແຕ່ເນັ້ນໜັກຈິດວິນຍານກ່ອນ

**18** ວັດຖຸສິ່ງຂອງເວົ້າເຖິງຄວາມຍຸດຕິທຳດ້ານສິ່ງຂອງເພື່ອຮ່າງກາຍຢ່າງດຽວ. ມີແຕ່ອານາຈັກຂອງພະເຈົ້າ ທີ່ວ່າດ້ວຍ____________________ ແທ້ຈິງ. (ຈົ່ງຕື່ມຄວາມທີ່ຂາດ)

**19** ອານາຈັກສະຫວັນກໍດີກວ່າວັດຖຸສິ່ງຂອງໃນອີກດ້ານໜຶ່ງຄື: ລາຊະອານາຈັກຂອງພະເຈົ້າ ຕັ້ງຕົ້ນພາຍໃນຄົນທີ່ເຊື່ອ. ຢູ່ໃນຈິດວິນຍານຕາມ ມທ 6:33 ອານາຈັກຂອງພະເຈົ້າເປັນຫ່ວງເລື່ອງຫຍັງ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ແຕ່ສະເພາະຄວາມຍຸດຕິທຳໃນສິ່ງແວດລ້ອມ ຄືຂອງກິນ, ຂອງດື່ມແດ່ ເຄື່ອງໜຸ່ງແດ່.

ຂ. ແຕ່ສະເພາະຄວາມຍຸດຕິທຳດ້ານຈິດວິນຍານ ຄືຄວາມສຳພັນລະຫວ່າງເຮົາກັບພະເຢຊູ.

ຄ. ທັງສອງແຕ່ເປັນຕົ້ນວ່າດ້ວຍສິ່ງແວດລ້ອມດ້ວຍຫວັງຕໍ່ໄປຈິດວິນຍານຈະດີຂຶ້ນອີກດ້ວຍ.

ງ. ທັງສອງແຕ່ເປັນຕົ້ນໃຫ້ຄົນຖິ້ມໃຈເກົ່າເອົາໃຈໃໝ່ ແລ້ວຕໍ່ໄປຄວາມຍຸດຕິທຳເພື່ອທຸກຄົນຈະໃຫ້ສິ່ງແວດລ້ອມດີ ຂຶ້ນມາ.

ຕອບ:

***15*** *ກ. ວັດຖຸສິ່ງຂອງ ຂ. ອານະຈັກຂອງ ພະເຈົ້າ*

***16*** *ໃນອານະຈັກຂອງ ພະເຈົ້າ*

***17*** *ງ.ຖືກ*

***18*** *ຄວາມຍຸດຕິທຳ*

***19*** *ງ.ຖືກ*

**20** ມີທີ່ແຕກຕ່າງລະຫວ່າງອານາຈັກພະເຈົ້າ ແລະວັດຖຸສິ່ງຂອງ 2 ປະການໃຫຍ່. ວັດຖຸສິ່ງຂອງເນັ້ນຫນັກແຕ່ຄວາມຕ້ອງ ການດ້ານຮ່າງກາຍ ອານາຈັກສະຫວັນເນັ້ນຫນັກທາງຈິດວິນຍານ ແລະຮ່າງກາຍດ້ວຍ.

ກ. ສ່ວນປະການທີສອງອັນໃດຫ່ວງກັບສິ່ງແວດລ້ອມ ແຕ່ບໍ່ຫ່ວງກັບຈິດວິນຍານ?

______________________________________________________________

ຂ. ອັນໃດຫ່ວງກັບຈິດວິນຍານກ່ອນແລະສິ່ງແວດລ້ອມຕໍ່ໄປ? ____________________

**21** ຄວາມຍຸດຕິທຳຂອງອານາຈັກພະເຈົ້າ ແລະຄວາມຍຸດຕິທຳຂອງວັດຖຸສິ່ງຂອງເປັນຄົນລະຢ່າງ. ອານາຈັກຂອງພະເຈົ້າ ບໍ່ມີສ່ວນບົກຜ່ອງຢ່າງວັດຖຸສິ່ງຂອງ ວັດຖຸສິ່ງຂອງບໍ່ກ່ຽວຂ້ອງກັບຈິດວິນຍານ ແຕ່ອານາຈັກຂອງພະເຈົ້າ ວ່າດ້ວຍທັງຈິດ ວິນຍານແລະຮ່າງກາຍອີກດ້ວຍ. ວັດຖຸສິ່ງຂອງບໍ່ຍອມຮັບຮູ້ເລື່ອງຄວາມຕ້ອງການໃນຈິດວິນຍານ ແຕ່ອານາຈັກຂອງ ພະເຈົ້າ ຕັ້ງຕົ້ນໃນຈິດວິນຍານ. ໃຫ້ທ່ານຊອກຫາຂໍ້ພະຄຳພີດັ່ງຕໍ່ໄປນີ້:

ກ. ພນມ 11:15 ອານາຈັກຂອງພະເຈົ້າຈະກິນທານບໍ່? ________________________

ຂ. ໂລມ 14:17 ມີຄວາມພໍໃຈໃນອານາຈັກຂອງພະເຈົ້າ ບໍ່? _____________________

ຄ. ຢຮ 3:3 ຈະປ່ຽນໃຈມະນຸດໃຫ້ໃຫມ່ໄດ້ບໍ່? ______________________________

ງ. I ເປໂຕ 1:9 ຈະໄຖ່ບາບໃຫ້ລອດພົ້ນໄດ້ບໍ່? _____________________________

**22** ອານາຈັກຂອງພະເຈົ້າມີປະໂຫຍດເຫນືອກວ່າວັດຖຸສິ່ງຂອງໃນ 4 ດ້ານຄື: (ຈົ່ງຕື່ມຄວາມທີ່ຂາດ)

ກ. ອານາຈັກຂອງພະເຈົ້າ ________________ ທານ.

ຂ. ອານາຈັກຂອງພະເຈົ້າໃຫ້ ________________ ໃຈ.

ຄ. ອານາຈັກຂອງພະເຈົ້າປ່ຽນ ________________ ມະນຸດໃຫມ່ໄດ້.

ງ. ອານາຈັກຂອງພະເຈົ້າໄຖ່ __________ ໃຫ້ ___________ ໄດ້.

**23** ໃນປ່າທີ່ ພະເຍຊູຖືກທົດລອງພະຍາມານຈະໃຫ້ພະເຍຊູເອົາຄວາມຍຸດຕິທຳອັນແທ້ຈິງໄປ ແລ້ວເອົາຄວາມຍຸດຕິທຳ ອັນມີບົກຜ່ອງຂຶ້ນມາແທນ ຄືການຍຸດຕິທຳດ້ານວັດຖຸສິ່ງຂອງ. ວັດຖຸສິ່ງຂອງນັ້ນຜິດຫຼາຍໃນດ້ານທີ່ຈະປ່ຽນໃຫ້ມະນຸດດີຂຶ້ນໂດຍທາງໃຫ້ສິ່ງແວດລ້ອມດີຂຶ້ນປາສະຈາກ ________________ . (ຈົ່ງຕື່ມຄວາມທີ່ຂາດ)

ຕອບ:

**20** *ກ. ວັດຖຸສິ່ງຂອງ ຂ. ອານາຈັກຂອງພະເຈົາ*

**21** *ກ. ກິນທານ ຂ. ມີ ຄ. ໄດ້ ງ. ໄດ້*

**22** *ກ. ກິນ ຂ. ພໍ ຄ. ຈິດວິນຍານ (ຈິດໃຈກໍໄດ້) ງ. ບາບ....ລອດພົນ*

**23** *ພະເຈົາ*

**24** ແຕ່ສ່ວນອານາຈັກຂອງພະເຈົ້າຈະປ່ຽນຈິດ ____________ ຂອງມະນຸດກ່ອນຈຶ່ງປ່ຽນສິ່ງແວດລ້ອມຕໍ່ໄປດ້ວຍອາໄສຄວາມ ຊ່ອຍເຫຼືອຈາກ ____________. (ຕື່ມຄວາມທີ່ຂາດ)

**25** ໃນລາຍຊື່ຕໍ່ໄປນີ້ມີຄົນໃດແດ່ ທີ່ຕົກໃນວັດຖຸສິ່ງຂອງ.

(ໃຫ້ຂຽນຄວາມ "ຕົກ" ຫຼື "ບໍ່ຕົກ" ຂ້າງຊ້າຍ)

ກ. ___________ ພະເຢຊູ (ມທ 19:21)

ຂ. ___________ ເສດຖີໂງ່ (ລູກາ 12:15-21)

ຄ. ___________ ຄົນທີ່ມາຫາພະອົງ (ຢຮ 6:26-27)

ງ. ___________ ຢູດາອິດສະກາລີອົດ (ຢຮ 12:4-6)

ຈ. ___________ ຊີໂມນ (ກຈກ 8:18-20)

ສ. ___________ ໂປໂລ (ຄລຕ 2:10)

ຊ. ___________ ໂມເຊ (ຮລ 11:24-26)

ຍ. ___________ ພວກຄຣິສຕຽນຢູ່ລາວດີເກອາ (ພນມ 3:17)

*ໃຫ້ພວກທ່ານຮັບພິຈາລະນາເລື່ອງຕໍ່ໄປນີ້:*

*ຜູ້ໃດກໍຮັບຮູ້ວ່າເປັນພາລະຂອງລັດຖະບານທີ່ຈະຊ່ວຍໃຫ້ປະຊາຊົນຢູ່ໃນສະພາບທີ່ດີ ລັດຖະບານກໍເຄີຍຊ່ວຍໃນຫຼາຍໆດ້ານກໍແມ່ນຢູ່.*

*ພວກຄຣິສຕຽນຮັບຮູ້ວ່າພາລະຍິ່ງໃຫຍ່ຂອງຄຣິສຕຽນເຫຼົ່ານັ້ນຄື: ການປະກາດຂ່າວປະເສີດຂອງພະເຢຊູໃຫ້ທຸກຄົນຮູ້ ໃຫ້ເຂົາຄືນດີກັບພະເຈົ້າ, ແຕ່ຖ້າຄຣິສຕຽນຄົນຫນຶ່ງຄົນໃດທຸກຍາກ ຄຣິສຕຽນນັ້ນຈະຊ່ວຍແຕ່ດ້ານຈິດວິນຍານຝ່າຍດຽວບໍ່? ຄວາມຮັກແລະຄວາມເມດຕາຂອງພະເຢຊູຄວນຈະປາກົດອອກມາຢ່າງໃດໃນຊີວິດເຮົາບໍ່? ຄຣິສຕຽນຈະຊ່ວຍຄົນຍາກຈົນທາງດ້ານຈິດໃຈແລະຮ່າງກາຍດ້ວຍບໍ່? (ໃຫ້ແລກປ່ຽນຄວາມຄິດເຫັນກັນແລະກັນ)*

<u>ຈົ່ງເປີດບົດເສັງທັງບົດທີ 16 ແລະ 17 ດ້ວຍກັນ</u>

ຕອບ:

**24** *ຈິດໃຈ (ຫຼືຈິດວິນຍານ) ພະເຈາ*

**25** *ບໍ່ຕົກ ກ. ສ. ຊ. ຕົກ ຂ. ຄ. ງ. ຈ. ແລະ ຍ.*